ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ເລກທີ: 175 /ພກພ/2025

ນະຄອນຫຼວງວຽງຈັນ, ວັນທີ: 31 ມີນາ 2025

ໜັງສືເຈ້ງເຊີນ (ສະບັບປັບປຸງ)

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ I ປີ 2025 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ສະບັບເລກທີ 155/ພກພ ລົງວັນທີ 27 ກຸມພາ 2025;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ II ປີ 2025 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ສະບັບເລກທີ 160/ພກພ ລົງວັນທີ 12 ມີນາ 2025;
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນຄັ້ງທີ III ປີ 2025 ສະບັບເລກທີ 170/ພກພ ລົງ ວັນທີ 28 ມີນາ 2025.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດເຂົ້າ ຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ທີ່ຈະໄດ້ຈັດຂຶ້ນໃນວັນທີ **25 ເມສາ 2025**, ເວລາ **09:00** ໂມງ (ເລີ່ມລົງທະບຽນເວລາ **08:00** ໂມງ), ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງ ປະຊຸມທີ່ຄັດຕິດມາພ້ອມນີ້.

ໃນກໍລະນີທີ່ທ່ານຜູ້ຖືຮຸ້ນບໍ່ສາມາດເຂົ້າຮ່ວມ ສາມາດມອບສິດໃຫ້ບຸກຄົນອື່ນເຂົ້າຮ່ວມປະຊຸມ ແລະ ອອກ ຄະແນນສຽງແທນ, ກະລຸນາຕື່ມຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມເອກະສານຄັດຕິດເຂົ້າຮ່ວມປະຊຸມ ແລະ ຕ້ອງສົ່ງມອບໃບມອບສິດໃຫ້ເລຂາກອງປະຊຸມກ່ອນມື້ປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະຫຼະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ປອ. ສິທອງ ພົມມະຈັດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2024

ວັນສຸກ ວັນທີ 25 ເມສາ 2025
ລົງທະບຽນເວລາ 08:00 ໂມງ
ສະຖານທີ່: ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງ
ບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທລະສັບ/ແຟັກ: +856 (21) 265 394.

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2024 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 (ເອກະສານຄັດຕິດ 2);
3. ເອກະສານລາຍງານການເງິນ ປະຈຳປີ 2024 (ເອກະສານຄັດຕິດ 3);
4. ຊີວະປະຫວັດຫຍໍ້ສະມາຊິກອິດສະລະ (ເອກະສານຄັດຕິດ 4);
5. ແບບຟອມໃບມອບສິດ (ເອກະສານຄັດຕິດ 5);
6. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7);

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 31 ມີນາ 2025, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມ **<u>ເອກະສານຄັດຕິດ 5</u>** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກ ອິດສະລະ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ (✓) ເພື່ອເລືອກເອົາສະມາຊິກອິດສະລະ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລຂາກອງປະຊຸມບໍລິສັດ ທີ່ຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ **25 ເມສາ 2025**.
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ **ທ່ານ ນາງ ວັນເພັ່ງ ສິນທະສອນ** ເບີໂທ (+856-21) 265 394 ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງ ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

ຂໍ້ມູນປະກອບ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໄດ້ຈັດຂຶ້ນໃນວັນທີ 26 ເມສາ 2024 ໂດຍກອງປະຊຸມໄດ້ພິຈາລະນາວາລະຕ່າງໆ ແລະ ໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ (**ເອກະສານຄັດຕິດ 2**).

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນ ປະຈຳປີ 2024 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ຂໍ້ມູນປະກອບ:

I. ຜົນການດຳເນີນງານ ປະຈຳປີ 2024 ມີດັ່ງລຸ່ມນີ້:


❖ **ວຽກງານດ້ານບຸກຄະລາກອນ**

ການດຳເນີນວຽກງານດ້ານບຸກຄະລາກອນໃນປີ 2024 ແມ່ນໄດ້ເນັ້ນຫນັກການຝຶກອົບຮົມ, ປັບປຸງໂຄງຮ່າງການຈັດຕັ້ງຂອງອົງກອນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.

ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດການສຳຫຼວດເພື່ອກະກຽມສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວາງອອກ.

ຜົນງານຂອງປີ 2024

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2024 ມີຈຳນວນ 147 ຄົນ
- ການລາອອກ 0 ຄົນ
- ຮັບພະນັກງານໃຫມ່ 2 ຄົນ
- ຖືກເລື່ອນຕຳແໜ່ງ 0 ຄົນ



- **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 0%.

- **ຈັດກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ**

- **ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ**

- ເຂົ້າຮ່ວມປະຊຸມສຳມະນາໃນຫຼາກຫຼາຍຫົວຂໍ້ກັບຕະຫຼາດຫຼັກຊັບລາວ ແລະ ສຄຄຊ;

- ເຂົ້າຮ່ວມຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດທັງພາຍໃນ ແລະ ຕ່າງປະເທດ.

- **ວຽກງານການຕະຫຼາດ**

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນເປັນການເຮັດການຕະຫຼາດ ເຊິ່ງສົ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງຢາງ 2 ຊັ້ນ ແຕ່ບ້ານອຸ້ ນະຄອນຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວງຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍົກລະດັບ ແຕ່ບ້ານກ໋ວເຈຍ ຫາ ບ້ານເມືອງຮ້ຽ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

II. ແຜນໂຄງການສືບຕໍ່ຈັດຕັ້ງປະຕິບັດ

1. ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າທັງໝົດ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍ ແມ່ນການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງ ກະກຽມຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ (ສະເພາະທີ່ບໍລິສັດພູສີຮັບຜິດຊອບແມ່ນ ຊ່ວງທີ 4 ແຕ່ ເຊໂນ ແຂວງສະຫວັນນະເຂດ ຫາ ນາປ່າງ ແຂວງສາລະວັນ, ລວງຍາວທັງມົດ 135.2 ກິໂລແມັດ ມູນຄ່າປະເມີນເບື້ອງ ຕົ້ນແມ່ນ 1.235,82 ລ້ານໂດລາສະຫະລັດ);
2. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນຮ່ວມ 25%, ເປັນຜູ້ຮັບເໝົາຫຼັກໃນການຂຸດຄົ້ນບໍ່ຖ່ານຫີນ ເມືອງວຽງພຸຄາ, ແຂວງຫຼວງນ້ຳທາ. ຄາດຄະເນມູນຄ່າການລົງທຶນ 5 ໂດລາ ຕໍ່ ໂຕນ, ລາຍຮັບ 12 ໂດລາ ຕໍ່ ໂຕນ (ໄດ້ຈາກຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານໂດລາ);
3. ໝູ່ບ້ານຈັດສັນສະໄຫມ, ຄອນໂດມີນັ່ມ, ບ້ານວິນລ້າ ແລະ ລີຊີເດັ້ນ ທີ່ເໝາະສຳລັບທ່ອໄປຈົນເຖິງໄຮເອັນ ຈຳນວນ 200,000 ຫລັງໃນທ່ອປະເທດ, ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ. ປັດຈຸບັນແມ່ນເລີ່ມຕົ້ນ ຈາກ 50,000 ຫຼັງ ຢູ່ແຂວງຫຼວງພະບາງ;
4. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເປັນຜູ້ຮັບເໝົາຫຼັກ ໃນການພັດທະນາ ໂຄງການກໍ່ສ້າງພື້ນຖານໂຄງ ລ່າງເຂດເສດຖະກິດພິເສດ ຫຼວງພະບາງ ໃນເບື້ອງຕົ້ນໃນມູນຄ່າ 20,000,000 ໂດລາສະຫະລັດ;
5. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ໄດ້ເຊົ່າເນື້ອທີ່ ໃນເຂດເສດຖະກິດພິເສດ ຫຼວງພະບາງ ເນື້ອທີ່ 500 ເຮັກຕາ ໃນການພັດທະນາອະສັງຫາລິມະຊັບເຊັ່ນ: ໃຫ້ເຊົ່າທີ່ດິນ ແລະ ເຊົ່າສາງ.

III.ເອກະສານລາຍງານການເງິນ ປະຈຳປີ 2024 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ຫົວໜ່ວຍ: ລ້ານກີບ

ລາຍການ	2024	2023
ຊັບສິນທັງໝົດ	970,220	992,801
ໜີ້ສິນທັງໝົດ	321,435	367,580
ສ່ວນຂອງຜູ້ຖືຮຸ້ນ	648,785	625,221
ລາຍຮັບທັງໝົດ	81,104	162,897
ກຳໄລ/(ຂາດທຶນ) ສຸດທິ	36,380	142,238
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	62.49	224.40

ລາຍລະອຽດຂອງ (ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2024 ຕາມ (**ເອກະສານຄັດຕິດ 3**).

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງ ໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03. ພິຈາລະນາ ແລະ ຮັບຮອງ ການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2024

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022, ມາດຕາ 153 ກຳນົດໃຫ້ "ການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນກ່ອນ" ແລະ ມາດຕາ 154 ກຳນົດໃຫ້ "ບໍລິສັດຕ້ອງຫັກ 10 ສ່ວນຮ້ອຍ ຂອງກຳໄລສຸດທິ ພາຍຫຼັງທີ່ໄດ້ຫັກເງິນຂາດທຶນ ເພື່ອສ້າງເປັນຄັງສຳຮອງ ໄວ້ໃນແຕ່ລະປີ".

ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບພາຍນອກ ປະຈຳປີ 2024, ບໍລິສັດມີກຳໄລຫຼັງ ອາກອນ 36,368 ລ້ານກີບ, ເຊິ່ງໃນປີທີ່ຜ່ານມາ ຜົນການດຳເນີນງານຂອງ ພກພ ສາມາດສ້າງກຳໄລ ແລະ ໄດ້ນຳກຳໄລ ຫຼັງອາກອນ ໄປຫັກລ້າງການຂາດທຶນສະສົມຫຼາຍປີກ່ອນ ລວມເຖິງໄດ້ມີການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ. ເຖິງ ຢ່າງໃດກໍ່ຕາມ, ໃນປີ 2024 ພກພ ໄດ້ພິຈາລະນາຈະນຳກຳໄລຫຼັງອາກອນ ເພື່ອໄປພັດທະນາໂຄງການອື່ນໆຂອງ ບໍລິສັດຕໍ່ໄປ. ດັ່ງນັ້ນ, ສະພາບໍລິຫານ ພກພ ຈຶ່ງໄດ້ຕົກລົງບໍ່ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ແລະ ສະເໜີຈັດສັນກຳໄລ ຫຼັງອາກອນ ປະຈຳປີ 2024 ດັ່ງລຸ່ມນີ້:

1) ເຂົ້າຄັງສຳຮອງຕາມລະບຽບການ ຈຳນວນ 3,637 ລ້ານກີບ ເທົ່າກັບ 10 ສ່ວນຮ້ອຍ;
2) ສ່ວນທີ່ເຫຼືອແມ່ນເຂົ້າກຳໄລສະສົມ ເພື່ອຂະຫຍາຍທຸລະກິດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງ ເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025

ຂໍ້ມູນປະກອບ:

I. ໂຄງການໃນແຜນປີ 2025-2030

1- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ສຳຫຼວດ-ອອກແບບ ແລະ ກໍ່ສ້າງເສັ້ນທາງດ່ວນເວັ້ນ ເມືອງ ແຕ່ຫຼັກ 21 ເມືອງໄຊທານີ ຫາ ບ້ານນາຂ່າ ເມືອງນາຊາຍທອງ ຄວາມຍາວ 33.15 ກມ ມູນຄ່າ 172.258.237,00 ໂດລາ;
2- ໂຄງການສຳຫຼວດ-ອອກແບບ ແລະ ປັບປຸງເປັນເສັ້ນທາງຄອນກຣີດ ແຕ່ 3 ແຍກນາຄວາຍ ຫາ ຫຼັກ 21 ຄວາມ ຍາວ 13.9 ກມ;
3- ໂຄງການ ສຳຫຼວດ-ອອກແບບ ທາງຊອຍ ແຕ່ບຶງທາດຫຼວງ ຫາ ສະຖານີລົດໄຟ ລາວ-ໄທ ຄຳສະຫວາດ ຄວາມ ຍາວ 2,5 ກມ;
4- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລົງທຶນຮ່ວມ 25%, ເປັນຜູ້ຮັບເໝົາຫຼັກໃນການຂຸດຄົ້ນບໍ່ຖ່ານ ຫີນ ເມືອງ ວຽງພຸຄາ, ແຂວງ ຫຼວງນ້ຳທາ, ຄາດຄະເນມູນຄ່າການລົງທຶນ 5 ໂດລາ ຕໍ່ໂຕນ, ລາຍຮັບ 12 ໂດ ລາ ຕໍ່ ໂຕນ (ໄດ້ກຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານໂດລາ)

5- ໃນພະລັງງານໄຟຟ້າແສງອາທິດ 1000 ເມັກກາວັດ. ຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8%;
6- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທຶນ ໂຄງການພະລັງງານໄຟຟ້ານ້ຳຕົກ ລວມເປັນ 1150 ເມັກກາວັດ;
7- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ກະກຽມປະມູນໂຄງການ:
   a. ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ຫຼວງພະບາງ ດ້ວຍທຶນ NEDA;
   b. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NIDA;
   c. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທຶນ EDCF (ປະເທດເກົາຫຼີ);
   d. ໂຄງການກໍ່ສ້າງສະໜາມຂີ່ເຫຍື້ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທຶນ ທະນາຄານໂລກ World Bank.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາ ມອບໝາຍໃຫ້ຜູ້ອຳນວຍການໃຫຍ່ ພກພ ປຶກສາຫາລືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ຽວກັບລະບຽບການທີ່ກ່ຽວຂ້ອງ ເພື່ອຄັດເລືອກຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2025 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 30.000 ໂດລາສະຫາລັດ. ຫາກມີຄວາມຄືບໜ້າທາງ ພກພ ຈະລາຍງານໃຫ້ຮັບຊາບຢ່າງຮີບດ່ວນ. ລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ (ໂດລາສະຫາລັດ)
2022	35.000
2023	35.000
2024	35.000

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06. ພິຈາລະນາ ແລະ ຮັບຮອງການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ

ຂໍ້ມູນປະກອບ: ແຜນການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1:5 (1 ຮຸ້ນເດີມ ແຕກອອກເປັນ 5 ຮຸ້ນໃໝ່) ເຮັດໃຫ້ມູນຄ່າກຳນົດຮຸ້ນຈາກ 1,000 ກີບ/ຮຸ້ນ ມາເປັນ 200 ກີບ/ຮຸ້ນ ແລະ ຈຳນວນຮຸ້ນທັງໝົດຂອງຮຸ້ນ ພກພ ເພີ່ມຂຶ້ນຈາກ 582,000,000 ຮຸ້ນ ມາເປັນ 2,910,000,000 ຮຸ້ນ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິສະເພາະດ້ວຍຄະແນນສຽງຢ່າງໜ້ອຍ 2/3 ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ວາລະທີ 07. ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພກພ

ຂໍ້ມູນປະກອບ: ເນື່ອງຈາກການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ ຈະຕ້ອງໄດ້ປັບປຸງເນື້ອໃນບາງມາດຕາຂອງກົດລະບຽບບໍລິສັດ. ດັ່ງນັ້ນ, ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ ກ່ຽວກັບ ການປັບປຸງກົດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພກພ ໂດຍມອບສິດໃຫ້ ພກພ ດຳເນີນການສະເໜີຂໍຮັບຮອງການປ່ຽນແປງເນື້ອໃນກົດລະບຽບບໍລິສັດ ແລະ ການຂຶ້ນທະບຽນປ່ຽນແປງໃບວິສາຫະກິດໃໝ່ ກັບເຈົ້າໜ້າທີ່ທະບຽນວິສາຫະກິດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິສະເພາະດ້ວຍຄະແນນສຽງຢ່າງໜ້ອຍ 2/3 ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ 80% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ເອກະສານຄັດຕິດ 02

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 047 /ພກພ
ນະຄອນຫຼວງວຽງຈັນ, ວັນທີ: 09 MAY 2024

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023
ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ໄດ້ຈັດກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນ ວັນທີ 26 ເມສາ 2024 ເວລາ 09:10 ໂມງ, ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ເຂົ້າຮ່ວມທັງໝົດ 23 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 7 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 16 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 572.574.800 ຮຸ້ນ, ເທົ່າກັບ 98,38% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ໄດ້ ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

ສະມະຊິກສະພາບໍລິຫານ	ຕຳແໜ່ງ
1. ທ່ານ ສີທາ ພົມມະຈັກ	: ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່;
2. ທ່ານ ນັນທະລັດ ທິລະກຸນ	: ສະມາຊິກສະພາບໍລິຫານອິດສະຫຼະ (ເຂົ້າຮ່ວມປະຊຸມທາງອອນລາຍ).

ທ່ານ ສີທອງ ພົມມະຈັກ / ປະທານສະພາບໍລິຫານ, ທ່ານ ບຸນມີ ມະນີວົງ ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ ແລະ ທ່ານ ພຸໄຂງ ອ້ອນລະມະນີ/ສະມາຊິກສະພາບໍລິຫານ ຕິດພາລະກິດ ຈຶ່ງບໍ່ສາມາດເຂົ້າຮ່ວມກອງ ປະຊຸມສາມັນຜູ້ຖືຮຸ້ນໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ສີທາ ພົມມະຈັກ ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່ ເປັນປະທານກອງປະຊຸມແທນ.

ພ້ອມດຽວກັນນີ້ ກໍ່ຍັງມີທ່ານຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ໃຫ້ກຽດເຂົ້າຮ່ວມ.

ພິທີກອນໄດ້ແນະນຳ ແລະ ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີ ການລົງຄະແນນ ແລະ ການນັບຜົນຄະແນນໃຫ້ທຸກທ່ານຮັບຊາບດັ່ງນີ້:

ເອກະສານຄັດຕິດ 02

ວາລະການປະຊຸມ:

ວາລະ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;

ວາລະ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023;

ວາລະ 3. ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2023 ເຂົ້າຕັ້ງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ;

ວາລະ 4. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024;

ວາລະ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກປະຈຳປີ 2024;

ວາລະ 6. ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່;

ວາລະ 7. ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່;

ວາລະ 8. ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຄິ່ງວຽກປີ 2024-2026;

❖ **ວິທີການລົງຄະແນນສຽງ:**

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ;

- ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ □ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;

- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

❖ **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກ ຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກປະທານໄດ້ປະກາດ ໃນກອງປະຊຸມຮັບ

ຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລົບກວນທ່ານກະລຸນາຍົກມືຂຶ້ນພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ພິທີກອນ ໄດ້ແຈ້ງໃຫ້ບັນດາຜູ້ເຂົ້າຮ່ວມຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ຫຼັງຈາກນັ້ນ ທ່ານ ສິທາ ພົມມະຈັກ ປະທານກອງປະຊຸມ, ເປັນຜູ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

ທ່ານ ປະທານກອງປະຊຸມ ໄດ້ລາຍງານກ່ຽວກັບກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 27 ເມສາ 2023 ໂດຍກອງປະຊຸມໄດ້ພິຈາລະນາວາລະຕ່າງໆ ແລະ ໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

ປະທານກອງປະຊຸມ ໄດ້ລາຍງານ ຕໍ່ກອງປະຊຸມ ກ່ຽວກັບຜົນການດຳເນີນງານຂອງບໍລິສັດ ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ເຊິ່ງມີລາຍລະອຽດດັ່ງນີ້:

I. ຜົນການດຳເນີນງານ ປະຈຳປີ 2023:

❖ ວຽກງານດ້ານບຸກຄະລາກອນ

ການດຳເນີນວຽກງານດ້ານບຸກຄະລາກອນໃນ ປີ 2023 ແມ່ນໄດ້ເນັ້ນນັກການຝຶກອົບຮົມ, ປັບປຸງໂຄງຮ່າງ ການຈັດຕັ້ງຂອງອົງກອນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ. ດ້ານສະຫວັດດີການ ສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດການສຳຫຼວດເພື່ອກະກຽມ ສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມອັນເວລາ ແລະ ມີມື້ລາພັກ ປະຈຳປີ ຕາມກົດໝາຍແຮງງານລາວວາງອອກ.

ຜົນງານຂອງປີ 2023

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2023 ມີຈຳນວນ 150 ຄົນ
- ການລາອອກ 15 ຄົນ
- ຮັບພະນັກງານໃຫມ່ 10 ຄົນ
- ຖືກເລື່ອນຕຳແໜ່ງ 0 ຄົນ



➢ ເງິນເດືອນ ແລະ ສະຫວັດດີການ

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 5%

➢ ຈັດກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ

- ງານພິບປະສາມັກຄີ ປີໃໝ່ສາກົນ ແລະ ປີໃໝ່ລາວ

➢ ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ

- ເຂົ້າຮ່ວມປະຊຸມສຳມະນາໃນຫຼາກຫຼາຍຫົວຂໍ້ກັບຕະຫຼາດຫຼັກຊັບລາວ
- ເຂົ້າຮ່ວມຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດທັງພາຍໃນ ແລະ ຕ່າງປະເທດ

❖ ວຽກງານການຕະຫຼາດ

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານອິສະຈະກຳກ່ຳສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນ ສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ, ດັ່ງນັ້ນ, ການເຮັດການຕະຫຼາດ ຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ

ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບງານເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອຂັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງຫຼວງ 2 ຊັ້ນ ແຕ່ບ້ານຍຸ້ ນະຄອນຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວງຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍົກລະດັບ ແຕ່ບ້ານກ໋ວເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

II. ແຜນໂຄງການທີ່ສືບຕໍ່ຈັດຕັ້ງປະຕິບັດ

1. ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າທັງໝົດ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍແມ່ນການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງກະກຽມຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ (ສະເພາະທີ່ບໍລິສັດພຸສີຮັບຜິດຊອບແມ່ນ ຊ່ວງທີ 4 ແຕ່ ເຊໂນ ແຂວງສະຫວັນນະເຂດ ຫາ ນາ ປົງ ແຂວງສາລະວັນ, ລວງຍາວທັງມົດ 135.2 ກິໂລແມັດ ມູນຄ່າປະເມີນເບື້ອງຕົ້ນແມ່ນ 1.235,82 ລ້ານໂດລາ ສະຫະລັດ);
2. ຫມູ່ບ້ານຈັດສັນສະໄຫມ, ຄອນໂດມີນຽມ, ບ້ານວິນລ໋າ ແລະ ລີຊີເດັ່ນ ທີ່ເໝາະສຳລັບທ່ຶອໄປຈົນເຖິງໃຊ້ເອັນ ຈຳນວນ 200.000 ຫລັງໃນທ່ົວປະເທດ, ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ. ປັດຈຸບັນແມ່ນເລີ່ມຕົ້ນຈາກ 50.000 ຫຼັງ ຢູ່ແຂວງຫຼວງພະບາງ;
3. ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ເປັນຜູ້ຮັບເໝົາຫຼັກ ໃນການພັດທະນາ ໂຄງການກໍ່ສ້າງພື້ນຖານໂຄງລ່າງ ເຂດເສດຖະກິດພິເສດ ຫຼວງພະບາງ ໃນເບື້ອງຕົ້ນໃນມູນຄ່າ 20.000.000 ໂດລາສະຫະລັດ;
4. ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ໄດ້ເຊົ່າເນື້ອທີ່ ໃນເຂດເສດຖະກິດພິເສດ ຫຼວງພະບາງ ເນື້ອທີ່ 500 ເຮັກຕາ ໃນການພັດທະນາອະສັງຫາລິມະຊັບເຊັ່ນ: ໃຫ້ເຊົ່າທີ່ດິນ ແລະ ເຊົ່າສາງ;

III. ເອກະສານລາຍງານການເງິນ ປະຈຳປີ 2023 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ຫົວໜ່ວຍ: ລ້ານກີບ

ລາຍການ	2023	2022
ຊັບສິນທັງໝົດ	992.801	703.774
ໜີ້ສິນທັງໝົດ	367.580	220.791
ສ່ວນຂອງຜູ້ຖືຮຸ້ນ	625.221	482.983
ລາຍຮັບທັງໝົດ	162.897	60.026
ກຳໄລ/(ຂາດທຶນ) ສຸດທິ	142.238	44.750
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	224,40	76,89

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ບົດລາຍງານຜົນການດຳເນີນງານຂອງ ບໍລິສັດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2023 ເຂົ້າຄັງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ ສພຊ ລົງວັນທີ 29 ທັນວາ 2022, ມາດຕາ 153 ກຳນົດໃຫ້ "ການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມ ຜູ້ຖືຮຸ້ນກ່ອນ" ແລະ ມາດຕາ 154 ກຳນົດໃຫ້ "ບໍລິສັດຕ້ອງຫັກ 10 ສ່ວນຮ້ອຍ ຂອງກຳໄລສຸດທິ ພາຍຫຼັງທີ່ໄດ້ຫັກເງິນຂາດທຶນ ເພື່ອສ້າງເປັນຄັງສຳຮອງໄວ້ໃນແຕ່ລະປີ"

ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບພາຍນອກ ປະຈຳປີ 2023, ບໍລິສັດມີກຳໄລສຸດທິ 142.238 ລ້ານກີບ ຫັກເຂົ້າຂາດທຶນສະສົມ 127.604 ລ້ານກີບແລ້ວ ເຮັດໃຫ້ບໍລິສັດມີຍອດເຫຼືອກຳໄລສຸດທິ 14.634 ລ້ານກີບ. ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຈັດສັນຍອດເຫຼືອກຳໄລສຸດທິ ປະຈຳປີ 2023 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ເຂົ້າຄັງສຳຮອງຕາມລະບຽບການ ຈຳນວນ 1.463 ລ້ານກີບ ເທົ່າກັບ 10 ສ່ວນຮ້ອຍ;
- ຈ່າຍເງິນປັນຜົນ ຈຳນວນ 12.804 ລ້ານກີບ ຫຼື 22 ກີບຕໍ່ຮຸ້ນ (ຈາກຈຳນວນຮຸ້ນທັງໝົດ 582.000.000 ຮຸ້ນ) ເທົ່າກັບ 87,4 ສ່ວນຮ້ອຍ;
- ສ່ວນທີ່ເຫຼືອແມ່ນເຂົ້າກຳໄລສະສົມ.

❖ ກຳນົດວັນທີ 27 ມີນາ 2024 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໄດ້ຮັບເງິນປັນຜົນ;

❖ ກຳນົດວັນທີ 24 ພຶດສະພາ 2024 ເປັນມື້ຈ່າຍເງິນປັນຜົນ.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2023 ເຂົ້າຄັງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ເອົາການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່ຶດຈ່າຍເງິນປັນຜົນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມ ກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ເຊິ່ງມີລາຍລະອຽດດັ່ງນີ້:

❖ **ໂຄງການໃນແຜນປີ 2024-2030**

1- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນຮ່ວມ 25%, ເປັນຜູ້ຮັບເໝົາຫຼັກໃນການຂຸດຄົ້ນບໍ່ຖ່ານຫີນ ເມືອງວຽງພຸຄາ, ແຂວງຫຼວງນ້ຳທາ. ຄາດຄະເນມູນຄ່າການລົງທຶນ 5 ໂດລາ ຕໍ່ ໂຕນ, ລາຍຮັບ 12 ໂດລາ ຕໍ່ ໂຕນ(ໄດ້ຈາກກຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານໂດລາ);

2- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໂຄງການທາງເວັ້ນຕົວເມືອງດອນໜຸນ ຫາ ບ້ານບົວ ນະຄອນຫຼວງວຽງຈັນ ໃນໄລຍະ 30 ກິໂລແມັດ. ຄາດຄະເນມູນຄ່າການລົງທຶນ 210 ລ້ານໂດລາ ດ້ວຍຜົນຕອບແທນ 10%;

3- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໃນພະລັງງານໄຟຟ້າແສງອາທິດ 1000 ເມັກກາວັດ. ຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8%;

4- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທຶນ ໂຄງການພະລັງງານໄຟຟ້ານ້ຳຕົກ ລວມເປັນ 1150 ເມັກກາວັດ;

5- ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາມະຫາຊົນ ກະກຽມປະມູນໂຄງການ ໂຄງການ

a. ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ຫຼວງພະບາງ ດ້ວຍທຶນ NEDA;
b. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NIDA;
c. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທຶນ EDCF (ປະເທດເກົາຫຼີ);

d. ໂຄງການກໍ່ສ້າງສະໜາມຂີ່ເຫຍື່ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທຶນທະນາຄານ ໂລກ World Bank.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2024.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2024

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານ ໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2024 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35.000 ໂດລາສະຫະລັດ, ບໍລິສັດ PWC ເປັນຜູ້ກວດສອບພາຍນອກທີ່ມີປະສົບການ, ຊຶ່ງມີຜູ້ກວດສອບ ແລະ ທີມງານມີ ຄວາມເຂົ້າໃຈແຈ່ຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫະລັດ)
2021	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000
2022	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000
2023	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກ ປະຈຳປີ 2024.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າ: ທ່ານ ບຸນມີ ມະນີວົງ ຮອງປະທານສະພາບໍລິຫານ, ທ່ານ ຢ ໂຂງ ອ້ວນລະມະນີ ສະມາຊິກສະພາບໍລິຫານ ແລະ ທ່ານ ສີຫາ ພົມມະຈັກ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ດຳລົງຕຳແໜ່ງໃກ້ຈະຄົບວາລະໃນວັນທີ 30 ມິຖຸນາ 2024 ແລະ ມີຈຸດປະສົງລາອອກຈາກຕຳແໜ່ງ ເພື່ອໄປຮັບຜິດຊອບໜ້າທີ່ໃໝ່.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 7: ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າ: ເນື່ອງຈາກ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຜູ້ເກົ່າ ໄປຮັບຜິດຊອບໜ້າທີ່ໃໝ່ ແລະ ຄົບວາລະ. ດັ່ງນັ້ນ, ພາຍ ຈຶ່ງສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດຽວກັນນັ້ນ, ສະເໜີແຕ່ງຕັ້ງສະມາຊິກສະພາບໍລິຫານເພີ່ມອີກ 2 ທ່ານ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1) **ທ່ານ ສິທາ ພິມມະຈິດ** ເປັນ ຮອງປະທານສະພາບໍລິຫານ;
2) **ທ່ານ ແພງ ດວງເງິນ** ເປັນ ຜູ້ອຳນວຍການໃຫຍ່ ພ້ອມທັງເປັນ ສະມາຊິກສະພາບໍລິຫານ;
3) **ທ່ານ ນາງ ໄຣທອງ ພິມມະຈິດ** ເປັນ ສະມາຊິກສະພາບໍລິຫານ;
4) **ທ່ານ ພຸດທະເສນ ພິມມີໄຊ** ເປັນ ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ;
5) **ທ່ານ ພູມສະຫວັນ ສຸນັນທອງ** ເປັນ ສະມາຊິກສະພາບໍລິຫານ.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ນອກຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການປັບປຸງເນື້ອໃນບາງມາດຕາຂອງກົດລະບຽບບໍລິສັດ ທີ່ຕິດພັນກັບສະພາບໍລິຫານ ເພີ່ມເຕີມ ເນື່ອງຈາກບໍລິສັດ ໄດ້ປັບປຸງໂຄງປະກອບດ້ານບຸກຄະລາກອນຂອງສະພາບໍລິຫານ ຈາກເດີມ 5 ທ່ານ ມາເປັນ 7 ທ່ານ ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ໃນການດຳເນີນການປັບປຸງເນື້ອໃນດັ່ງກ່າວໃນກົດລະບຽບຂອງບໍລິສັດ ໃຫ້ສອດຄ່ອງຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງກຳນົດ.

---

10 ໂປ່ລິສັດ ຜູ້ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທີເນັນໂທ ຜລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການປັບປຸງເນື້ອໃນບາງມາດຕາຂອງ ກົດລະບຽບບໍລິສັດ ທີ່ຕິດພັນກັບສະພາບໍລິຫານ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການປັບປຸງເນື້ອໃນບາງມາດຕາຂອງກົດ ລະບຽບບໍລິສັດ ທີ່ຕິດພັນກັບສະພາບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ຫຼາຍ ກວ່າແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ວາລະທີ 8: ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026

ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມລະບຽບຂອງ ພກພ ແລະ ຂໍ້ຕົກລົງວ່າດ້ວຍສະພາ ບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019, ສະມາຊິກສະພາບໍລິຫານ ມີອາຍຸການ 2 ປີ ແລະ ສະພາ ບໍລິຫານຂອງ ພກພ ຊຸດປະຈຸບັນ ໄດ້ຮັບການແຕ່ງຕັ້ງໂດຍກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ແລະ ໄດ້ຖືກຮັບຮອງຕໍ່ ອາຍຸການຂອງສະພາບໍລິຫານອີກ 1 ປີ ໂດຍກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເຊິ່ງຈະຄົບວາລະໃນວັນທີ 30 ມິຖຸນາ 2024.

ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານຂອງ ພກພ ດຳເນີນໄປຢ່າງຕໍ່ເນື່ອງ. ດັ່ງນັ້ນ, ພກພ ຈຶ່ງສະເໜີໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026 ນັບຕັ້ງແຕ່ວັນທີ 01 ກໍລະກົດ 2024 ແລະ ຈະຄົບອາຍຸການໃນວັນທີ 30 ມິຖຸນາ 2026; ລາຍຊື່ຂອງສະພາບໍລິຫານ ພກພ ມີດັ່ງລຸ່ມນີ້:

1. ທ່ານ ປອ ສີທອງ ພົມມະຈັດ : ປະທານສະພາບໍລິຫານ
2. ທ່ານ ສີທາ ພົມມະຈັດ : ຮອງປະທານສະພາບໍລິຫານ
3. ທ່ານ ນັນທະລັດ ທິລະກຸນ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
4. ທ່ານ ແພງ ດວງເງິນ : ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
5. ທ່ານ ນາງ ໄຣທອງ ພົມມະຈັດ : ສະມາຊິກສະພາບໍລິຫານ
6. ທ່ານ ພຸດທະເສນ ພົມມີໄຊ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
7. ທ່ານ ພູມສະຫວັນ ສຸນັນທອງ : ສະມາຊິກສະພາບໍລິຫານ

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ເອກະສານຄັດຕິດ 02

ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້:

- ເຫັນດີ 572.574.800 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 572.574.800 ສຽງ ຄິດເປັນ 100 %.

ປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ຮັບການພິຈາລະນາ ແລະ ອະນຸມັດຄົບຖ້ວນທຸກວາລະຕາມໜັງສືເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແລະ ສອບຖາມຕື່ມ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ສີທາ ພົມມະຈິດ ປະທານກອງປະຊຸມ ໄດ້ກ່າວໃນນາມສະພາບໍລິຫານຂອງ ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ມີກຽດທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນມື້ນີ້ ຂໍອວຍພອນໄຊແກ່ບັນດາທ່ານ ຄະນະສະພາບໍລິຫານ ບໍລິສັດ, ຜູ້ຖືຮຸ້ນ ແລະ ແຂກຜູ້ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມບໍ່ມີບັນຫາເພີ່ມຕື່ມທີ່ຈະພິຈາລະນາ, ທ່ານປະທານກອງປະຊຸມໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງການ ໃນເວລາ 10:30 ໂມງ ຂອງວັນດຽວກັນ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ທ່ານ ສີທາ ພົມມະຈິດ

ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່

ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.

ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທີເນັນໃຫ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

DRAFT

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2024

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ຄຳເຫັນ

ພວກເຮົາມີຄວາມເຫັນວ່າ, ເອກະສານລາຍງານການເງິນ ຂອງ ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ບໍລິສັດ) ສຳລັບປີສິ້ນສຸດ 31 ທັນວາ 2024 ໄດ້ຖືກກະກຽມ, ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ໃນເອກະສານລາຍງານການເງິນສະບັບນີ້.

ການກວດສອບຂອງພວກເຮົາມີ

ເອກະສານລາຍງານການເງິນຂອງ ບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2024;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນ ຫົວຂໍ້ ຄວາມຮັບຜິດຊອບ ຂອງຜູ້ກວດສອບອິດສະຫຼະສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີນານາຊາດ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ IESBA Code.

pwc

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການ ບັນຊີ. ເອກະສານລາຍງານການເງິນ ແມ່ນຖືກກະກຽມຕາມນະໂຍບາຍບັນຊີຂອງບໍລິສັດ ເຊິ່ງພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ (IFRS). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄຳເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນ ໜຶ່ງຫົວຂໍ້ສຳຄັນມາລວມໃນການກວດສອບເອກະສານລາຍງານການເງິນຄື ຄ່າເຜື່ອບັນຊີໜີ້ຕ້ອງຮັບສົງໄສຈະສູນ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ຄ່າເຜື່ອບັນຊີໜີ້ຕ້ອງຮັບສົງໄສຈະສູນ *ອີງຕາມບົດອະທິບາຍທີ 2.4 'ສະຫຼຸບລວມວິທີການບັນຊີທີ່ສຳຄັນ - ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ' ແລະ ບົດອະທິບາຍທີ 4 'ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ' ໃນເອກະສານລາຍງານການເງິນ.* ໃນວັນທີ 31 ທັນວາ 2024, ໜີ້ຕ້ອງຮັບທາງການຄ້າ - ລັດຖະບານ ຂອງ ສປປ ລາວ (ລັດຖະບານ), ເຊິ່ງເປັນລູກຄ້າລາຍດຽວຂອງ ບໍລິສັດ ທີ່ມີຍອດຄ້າງຊຳລະ ຈຳນວນ 227,543 ລ້ານກີບ, ຫັກຄ່າ ເຜື່ອບັນຊີໜີ້ຕ້ອງຮັບສົງໄສຈະສູນ ຄິດເປັນ 23% ຂອງຊັບສິນທັງ ໝົດໃນເອກະສານລາຍງານການເງິນ, ເຊິ່ງໄດ້ສະແດງມູນຄ່າຍັງເຫຼືອ ຕາມບັນຊີສຸດທິ ຈຳນວນ 0 ກີບ. ເງື່ອນໄຂການຊຳລະເງິນ ຂຶ້ນຢູ່ກັບ ງົບປະມານປະຈຳປີຂອງລັດຖະບານ. ຜົນໄດ້ຮັບຈາກການຊຳລະເງິນ ແລະ ຫັກລົບໜີ້ໃນລະຫວ່າງປີແມ່ນຈຳນວນ 2,366 ລ້ານກີບຈົນ ເຖິງວັນທີຂອງບົດລາຍງານ. ສິ່ງຜົນກະທົບຕໍ່ທຶນໝຸນວຽນ. ໃນປະຈຸບັນບໍລິສັດ, ຢູ່ລະຫວ່າງການເຈລະຈາເງື່ອນໄຂໃໝ່ໃນການ ຊຳລະເງິນກັບລັດຖະບານ. ຜູ້ບໍລິຫານໄດ້ພິຈາລະນາຕັ້ງຄ່າເຜື່ອ ບັນຊີໜີ້ສົງໄສຈະສູນຕາມມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ. ຈຳນວນທີ່ຄາດວ່າຈະໄດ້ຮັບຄືນເປັນການປະເມີນໂດຍອ້າງອີງເຖິງ ອາຍຸ ແລະ ປະຫວັດຂອງການຊຳລະ.	ຂັ້ນຕອນສຳຄັນຂອງພວກເຮົາລວມເຖິງຕໍ່ໄປນີ້: • ສອບຖາມຜູ້ບໍລິຫານກ່ຽວກັບວິທີການທີ່ໃຊ້ ລວມເຖິງຂໍ້ ສົມມຸດຕິຖານ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຂັ້ນຕອນ ຂອງຜູ້ບໍລິຫານ ແລະ ນະໂຍບາຍສຳລັບການຕັ້ງຄ່າເຜື່ອບັນຊີ ໜີ້ສົງໄສຈະສູນ; • ກວດສອບຄວາມຖືກຕ້ອງຂອງອາຍຸລູກໜີ້ໃນທ້າຍປີ ຕາມ ພື້ນຖານຕົວຢ່າງ; • ກວດສອບເອກະສານປະກອບ ເຊັ່ນ ໃບຢັ້ງຢືນການສຳເລັດ ວຽກງານທີ່ຮອງຮັບໂດຍລັດຖະບານ ເພື່ອໃຫ້ໝັ້ນໃຈວ່າ ລັດຖະບານຍອມຮັບຄວາມຄືບໜ້າຂອງວຽກງານ, ການຮັບ ເງິນ ຫຼື ການຫັກລົບໜີ້; • ປະເມີນຄວາມສາມາດໃນການເກັບກູ້ຄືນຂອງໜີ້ທີ່ຍັງບໍ່ໄດ້ຊຳ ລະຕາມຕົວຢ່າງພື້ນຖານໂດຍຜ່ານການປະເມີນຜົນຂອງຜູ້ ບໍລິຫານຂອງການປະເມີນຂອງພວກເຮົາ ໂດຍອ້າງອີງເຖິງຂໍ້ ມູນປະຫວັດສິນເຊື່ອຂອງລູກຄ້າ, ຮູບແບບປະຫວັດການ ຊຳລະຂອງລູກຄ້າ, ຂໍ້ມູນຂ່າວສານທີ່ມີຕໍ່ສາທາລະນະ ແລະ ການຕິດຕໍ່ພົວພັນຫຼ້າສຸດກັບລູກຄ້າ ແລະ ພິຈາລະນາຄືນ ຖ້າວ່າຕ້ອງມີການຕັ້ງສຳຮອງເພີ່ມຕື່ມ; ແລະ • ກວດສອບການຊຳລະທີ່ຕາມມາຂອງລູກໜີ້ຕ້ອງຮັບທາງການ ຄ້າ ຫຼັງຈາກວັນທີ່ຂອງໃບລາຍງານຖານະການເງິນຕາມ ພື້ນຖານຕົວຢ່າງ, ຖ້າມີ.

pwc

ເລື່ອງສຳຄັນໃນການກວດສອບ (ຕໍ່)

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ເນື່ອງຈາກບັນຊີໜີ້ຕ້ອງຮັບທາງການຄ້າມີຄວາມສຳຄັນຕໍ່ເອກະສານລາຍງານການເງິນ ແລະ ຄ່າເຜື່ອໜີ້ສົງໄສຈະສູນຂຶ້ນຢູ່ກັບການພິຈາລະນາຂອງຜູ້ບໍລິຫານໃນການປະເມີນສະຖານະການ ແລະ ເງື່ອນໄຂຂອງລູກໜີ້ບັນຊີຕ້ອງຮັບທາງການຄ້າເພື່ອພິຈາລະຄວາມສາມາດໃນການຊຳລະໜີ້ໃຫ້ບໍລິສັດ.	ຈາກຂັ້ນຕອນຂ້າງເທິງ ພວກເຮົາໄດ້ສ້າງຄວາມເຂົ້າໃຈກັບຕົວເອງ ວ່າຜູ້ບໍລິຫານໄດ້ໃຊ້ການພິຈາລະນາຢ່າງສົມເຫດສົມຜົນ ທີ່ມີຫຼັກຖານສຳຄັນປະກອບໃນສ່ວນຂອງຍອດເຫຼືອໜີ້ຕ້ອງຮັບທີ່ກ່ຽວຂ້ອງ. ພວກເຮົາບໍ່ພົບບັນຫາໃດໆ ຜ່ານຂັ້ນຕອນການກວດສອບເຫຼົ່ານີ້ ເຊິ່ງລະບຸວ່າການຕັ້ງສຳຮອງໃນສ່ວນຂອງໜີ້ຕ້ອງຮັບທາງການຄ້າບໍ່ເໝາະສົມ.

ຂໍ້ມູນອື່ນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານປະຈຳປີ ແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄວບຄຸມເຖິງຂໍ້ມູນອື່ນ ແລະ ບໍ່ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນອື່ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການ ໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນ.

pwc

ຄວາມຮັບຜິດຊອບ ຂອງຜູ້ກວດສອບ ສຳລັບການກວດສອບເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມທັງການອອກຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.

- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີຜົນໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່ ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານການເງິນ, ຖ້າຫາກການເປີດເຜີຍ ດັ່ງກ່າວ ບໍ່ພຽງພໍຈະເຮັດໃຫ້ ການສະຫຼຸບຄວາມເຫັນຂອງພວກເຮົາຈະປ່ຽນແປງໄປຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍ່ຕາມ ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນການໄດ້ຢ່າງຕໍ່ເນື່ອງ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ບຸກຄົນພາຍນອກອາດພິຈາລະນາເຖິງການກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບ ເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ພິງພັນ ດຳຣົງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ 21 ມີນາ 2025

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ

ວັນທີ 31 ທັນວາ 2024

	ບົດ ອະທິບາຍ	2024 ລ້ານກີບ	2023 ລ້ານກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	371	366
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	458,222	575,207
ເຄື່ອງໃຊ້ສະໜອງ		318	320
ການລົງທຶນໃນຫຼັກຊັບ - ຕີໄວ້ຈົນຄົບກຳນົດ	5	-	5,657
ຊັບສິນໝຸນວຽນອື່ນໆ	7	306	1,778
ລວມຊັບສິນໝຸນວຽນ		**459,217**	**583,328**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	8	321,056	213,732
ຊັບສິນກັດຕີຫ້ຶເພື່ອການລົງທຶນ	6	189,442	189,442
ເງິນໃຫ້ກູ້ຍືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ		505	861
ການລົງທຶນໃນຫຼັກຊັບ - ຕີໄວ້ຈົນຄົບກຳນົດ	5	-	5,438
ລວມຊັບສິນບໍ່ໝຸນວຽນ		**511,003**	**409,473**
ລວມຊັບສິນ		**970,220**	**992,801**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	9	118,313	133,168
ເງິນກູ້ຍືມໄລຍະຍາວ - ສະຖາບັນການເງິນ	10	116,096	29,422
ໜີ້ຕ້ອງສົ່ງລາຫອນກຳໄລ	11	6,206	11,175
ໜີ້ສິນໝຸນວຽນອື່ນໆ	12	42,320	55,315
ລວມໜີ້ສິນໝຸນວຽນ		**282,935**	**229,080**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຍືມໄລຍະຍາວ	10	38,500	138,500
ລວມໜີ້ສິນບໍ່ໝຸນວຽນ		**38,500**	**138,500**
ລວມໜີ້ສິນ		**321,435**	**367,580**
ທຶນ			
ທຶນຈົດທະບຽນ	13	582,000	582,000
ສ່ວນເກີນມູນຄ່າຮຸ້ນ	13	12,540	12,540
ກຳໄລສະສົມ			
ສຳຮອງຕາມລະບຽບການ	14	21,147	17,510
ບໍ່ໄດ້ຈັດສັນ		33,098	13,171
ລວມທຶນ		**648,785**	**625,221**
ລວມໜີ້ສິນ ແລະ ທຶນ		**970,220**	**992,801**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 21 ມີນາ 2025

ທ່ານ ບຸນ ໄຂທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 21 ມີນາ 2025

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ພຸຂີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຜົນໄດ້ຮັບ

ສຳລັບຫ້າຍປີສິ້ນສຸດວັນທີ 31 ທັນວາ 2024

	ອ້າງ ອະທິບາຍ	2024 ລ້ານກີບ	2023 ລ້ານກີບ
ລາຍຮັບຈາກການກໍ່ສ້າງ		400	1,095
ຕົ້ນທຶນໃນການກໍ່ສ້າງ		(269)	(639)
ກຳໄລເບື້ອງຕົ້ນ		**131**	**456**
ກຳໄລຈາກການຂາຍຊັບສິນ, ສຸດທິ		71,018	75,618
(ຂາດທຶນ)/ກຳໄລຈາກຄ່າເຜື່ອປັບຊຸມູນຄ່າ, ສຸດທິ		(24,003)	81,702
ລາຍຮັບດ້ານອື່ນ		9,552	3,837
ລາຍຮັບທາງການເງິນ		134	645
ລາຍຈ່າຍບໍ່ລິຫານ		(3,376)	(4,963)
ຂາດທຶນ ຈາກອັດຕາແລກປ່ຽນ		(187)	(480)
ລາຍຈ່າຍທາງການເງິນ		(16,889)	(14,544)
ກຳໄລ ກ່ອນລາຍຈ່າຍອາກອນກຳໄລ		**36,380**	**142,271**
ລາຍຈ່າຍອາກອນກຳໄລ	18	(12)	(33)
ກຳໄລ ສຳລັບປີ		**36,368**	**142,238**
ກຳໄລ ຕໍ່ຮຸ້ນ			
ກຳໄລ ພື້ນຖານຕໍ່ຮຸ້ນ	19	62.49	244.40

ທ່ານ ແສງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 21 ມິນ 2025

ທ່ານ ນາງ ໄຂທອງ ພົມມະຈັດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 21 ມິນ 2025

ບັດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ຍິດ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ສຳຮອງ ຕາມລະບຽບການ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ຍັງບໍ່ໄດ້ຈັດສັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາໃນວັນທີ 1 ມັງກອນ 2024	13,14	**582,000**	**12,540**	**17,510**	**13,171**	**625,221**
ກຳໄລສຳລັບປີ		-	-	-	36,368	36,368
ຈ່າຍເງິນປັນຜົນ		-	-	-	(12,804)	(12,804)
ສຳຮອງຕາມລະບຽບການ	14	-	-	3,637	(3,637)	-
ຍອດຄົງເຫຼືອວັນທີ 31 ທັນວາ 2024		**582,000**	**12,540**	**21,147**	**33,098**	**648,785**
ຍອດຍົກມາໃນວັນທີ 1 ມັງກອນ 2023	13,14	**582,000**	**12,540**	**16,047**	**(127,604)**	**482,983**
ກຳໄລສຳລັບປີ		-	-	-	142,238	142,238
ສຳຮອງຕາມລະບຽບການ	14	-	-	1,463	(1,463)	-
ຍອດຄົງເຫຼືອວັນທີ 31 ທັນວາ 2023		**582,000**	**12,540**	**17,510**	**13,171**	**625,221**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 21 ມີນາ 2025

ທ່ານ ນາງ ໄຮທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 21 ມີນາ 2025

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ໝາຍ ເຫດ ອະທິບາຍ	2024 ລ້ານກີບ	2023 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລ ກ່ອນອາກອນກຳໄລສຳລັບປີ		36,380	142,271
ການດັດແກ້:			
- (ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນທີ່ບໍ່ທັນເກີດຂຶ້ນຈິງ		(47)	426
- ຄ່າຫຼຸ້ຍຫ້ຽນ	8	84	208
- ລາຍຈ່າຍທາງການເງິນ		16,889	14,544
- ກຳໄລຈາກການຂາຍຊັບສິນ, ສຸດທິ		(63,048)	(75,618)
- ຂາດທຶນ/(ກຳໄລ) ຈາກກຳປ໊ອຍນຊັ່ວຄາວຈະລຸນ, ສຸດທິ	5	24,003	(81,702)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປ່ງທຶນໝຸນວຽນ		**14,261**	**129**
ການປ່ຽນແປ່ງຂອງຊັບສິນດຳເນີນງານ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		152,759	(157,347)
- ເຄື່ອງໃນສາງ		2	-
- ຊັບສິນໝຸນວຽນອື່ນໆ		-	(559)
ການປ່ຽນແປ່ງໜີ້ສິນດຳເນີນງານ:			
- ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(99,884)	54,614
- ໜີ້ສິນໝຸນວຽນອື່ນໆ		1,350	(4,977)
ເງິນສົດທີ່ໄດ້ມາຈາກ /(ໃຊ້ໄປ) ການກິດຈະກຳດຳເນີນງານ		**68,488**	**(108,140)**
ອາກອນກຳໄລທີ່ຈ່າຍ		(78)	(2,197)
ເງິນສົດທີ່ໄດ້ມາຈາກ/(ໃຊ້ໄປ) ກິດຈະກຳດຳເນີນງານ, ສຸດທິ		**68,410**	**(110,337)**
ເງິນສົດທີ່ໄດ້ມາຈາກຈາກກິດຈະກຳການລົງທຶນ			
ຮັບເງິນຈາກການຂາຍຊັບສິນ		-	25,000
ຊື້ ທີ່ດິນ, ອາຄານ ແລະ ອຸປະກອນ	8	(6,138)	-
ເງິນສົດທີ່ (ໃຊ້ໄປ)/ໄດ້ມາ ໃນກິດຈະກຳ ການລົງທຶນ, ສຸດທິ		**(6,138)**	**25,000**
ເງິນສົດທີ່ໄດ້ມາຈາກກິດຈະກຳການເງິນ			
ລາຍຮັບຈາກການກູ້ຢືມ	10	-	104,000
ຊຳລະຄືນເງິນກູ້ຢືມ	10	(13,326)	(9,000)
ຈ່າຍເງິນປັນຜົນ		(14,667)	-
ລາຍຈ່າຍດອກເບ້ຍ		(34,274)	(10,892)
ກະແສເງິນສົດທີ່ (ໃຊ້ໄປ)/ໄດ້ມາຈາກກິດຈະກຳການເງິນ, ສຸດທິ		**(62,267)**	**84,108**
ການ ເພີ່ມຂຶ້ນ/(ຫຼຸດລົງ) ຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ສຸດທິ		**5**	**(1,229)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3	366	1,595
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	3	**371**	**366**
ລາຍການທີ່ບໍ່ແມ່ນເງິນ:			
ຫັກລ້າງໜີ້ຕ້ອງຮັບຈາກລັດຖະບານລາວ ແລະ ການລົງທຶນພັນທະບັດທີ່ຖືໄວ້ຈົນເຖິງກຳນົດ	5	-	5,789
ໜີ້ຕ້ອງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ ຈາກການສະສາງພັນທະບັດທີ່ຖືໄວ້ຈົນເຖິງກຳນົດ	5	12,446	5,789
ໜີ້ຕ້ອງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ ຈາກການຂາຍຊັບສິນ		299,690	161,775
ໜີ້ຕ້ອງສົ່ງ ສຳລັບການຊື້ທີ່ດິນ, ອາຄານ ແລະ ອຸປະກອນ	8	85,029	-
ຊຳລະເງິນສຳລັບການຊື້ທີ່ດິນ, ອາຄານ ແລະ ອຸປະກອນ ດ້ວຍພັນຊີໜີ້ຕ້ອງຮັບ	8	85,199	-
ຈັດປະເພດຄືນ ທີ່ດິນຈາກທີ່ດິນ, ອາຄານ ແລະ ອຸປະກອນ ເປັນຊັບສິນບັດກົງທີ່ເພື່ອການລົງທຶນ		-	189,442

ທ່ານ ແຂງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 21 ມີນາ 2025

ທ່ານ ນາງ ໄຊທອງ ພິມມະຈັດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 21 ມີນາ 2025

1. ຂໍ້ມູນທົ່ວໄປ

ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິເນນ ໂທ ພຣາຊ່າ, ບ້ານໜອງປ໊ອກອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ, ມີພຽງລູກຄ້າດຽວ ກໍຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານທາງການເງິນນີ້ໄດ້ຜ່ານການອະນຸມັດໂດຍຄະນະຜູ້ບໍລິຫານ ໃນວັນທີ 21 ມີນາ 2025.

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS. ເຖິງຢ່າງໃດກໍ່ຕາມ, ກະຊວງການ ເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອກະກຽມເຮັດແຜນປະຕິບັດການ ໃນການນຳໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກໍ່ຕາມ, ບໍລິສັດທີ່ຈົດ ທະບຽນໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນຳໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRS).

ການສ້າງເອກະສານລາຍງານການເງິນແມ່ນ ຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ວາງການສົມມຸດຖານຫຼາຍປະການ ເພື່ອສະ ແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາ ທີ່ໄດ້ລາຍງານ. ສະນັ້ນ ຕົວເລກທີ່ຄາດຄະເນໄວ້ນັ້ນ ອ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນເບື້ອງຕົ້ນ.

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ

ສະຖານະການເງິນຂອງບໍລິສັດມີຫນີ້ສິນໝຸນວຽນເກີນຊັບສິນໝຸນວຽນ ຈຳນວນ 174,237 ລ້ານກີບ. ພາກສ່ວນກ່ຽວຂ້ອງໄດ້ ອອກຈົດໝາຍຢືນຢັນເຖິງບໍລິສັດ ວ່າຈະບໍ່ຮຽກເກັບ ໜີ້ຕ້ອງສົ່ງ ນະວັນທີ 31 ທັນວາ 2024, ລວມມູນຄ່າທັງໝົດ 107,648 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 31 ທັນວາ 2024 ເປັນຕົ້ນໄປ ແລະ ສະໜັບສະໜຸນບໍລິສັດໂດຍຍອມຮັບ ຄວາມຮັບຜິດຊອບ ໃນການຈັດຫາ ແລະ ດຳເນີນການໃຫ້ຄວາມຊ່ວຍເຫລືອທາງການເງິນຢ່າງພຽງພໍໃຫ້ແກ່ບໍລິສັດຕາມຄວາມ ຈຳເປັນ ແລະ ເມື່ອມີຄວາມຈຳເປັນ ເພື່ອໃຫ້ບໍລິສັດສາມາດດຳເນີນກິດຈະການຕໍ່ໄປ ແລະ ປະຕິບັດຕາມພາລະຜູກພັນທາງການ ເງິນທັງໝົດໃນປະຈຸບັນ ແລະ ອານາຄົດ ຈຶ່ງຄາດວ່າບໍລິສັດຈະມີຖານະທາງການເງິນພຽງພໍ.

ດັ່ງນັ້ນ, ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຖືກກະກຽມບົນພື້ນຖານການດຳເນີນງານຕໍ່ເນື່ອງ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.2 ການແລກປ່ຽນເງິນຕາຕ່າງປະເທດ

ທຸກລາຍການເຄື່ອນໄຫວໃນເອກະສານລາຍງານການເງິນ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ (ກີບ).

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນຂອງມື້ທີ່ມີລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນໃນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ, ຍົກເວັ້ນບາງສັນຍາກັບຜູ້ສະໜອງທີ່ບໍລິສັດກຳນົດ ອັດຕາແລກປ່ຽນແບບຄົງທີ່ ແລະ ບໍ່ຕ້ອງແປງຄ່າເປັນສະກຸນເງິນກີບທຸກສິ້ນເດືອນ ຈົນກວ່າຈະມີການຊຳລະລາຍການຕັ້ງກ່າວ. ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກການຊຳລະ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງເທດແມ່ນ ໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມມີເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີແມ່ນ ສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.4 ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນມູນຄ່າຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໄສຈະສູນ ຕາມຍອດເຫຼືອໃນວັນສິ້ນປີ, ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອລູກໜີ້ການຄ້າ ແລະ ລູກໜີ້ອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ.

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ຕົ້ນທຶນ ໄດ້ນຳໃຊ້ວິທີ ສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ, ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດ້ຮັບ. ລາຄາຂາຍອອກສຸດທິທີ່ຄາດວ່າຈະໄດ້ຮັບແມ່ນລາຄາ ສິນຄ້າຄົງເຫຼືອ ສາມາດຮັບຮູ້ໄດ້ ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນ ໃນການຂາຍອອກ. ຄ່າສຸນເສຍມູນຄ່າ ເກີດຂຶ້ນ. ໃນກໍລະນີ ເຄື່ອງໃນສາງເຄື່ອນໄຫວຊ້າ ຫຼື ລ້າສະໄໝ ແລະ ເສຍຄຸນ.

2.6 ການລົງທຶນໃນຫຼັກຊັບ

2.6.1 ຫຼັກຊັບຖືໄວ້ຈົນຄົບກຳນົດ

ຫຼັກຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼື ການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳນົດທີ່ແນ່ນອນ ເຊິ່ງບໍລິສັດມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກຳນົດເພື່ອຮັບດອກເບ້ຍ. ເມື່ອຫຼັກຊັບ ມີຈຸດປະສົງ/ກຳນົດ ແນ່ນອນທີ່ຈະຖືກຂາຍ ກ່ອນວັນຄົບກຳນົດ ແລະ ຖືກອະນຸມັດ ໂດຍຜູ້ບໍລິຫານ ແລະ ຫຼັກຊັບເຫຼົ່ານີ້ຈະຖືກຈັດ ປະເພດຄືນໃໝ່ ເປັນຫຼັກຊັບທີ່ພ້ອມສຳລັບການຂາຍ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນຳສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ການລົງທຶນໃນຫຼັກຊັບ (ຕໍ່)

2.6.1 ຫຼັກຊັບຖືໄວ້ຈົນຄົບກຳນົດ (ຕໍ່)

ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນໄດ້ຮັບໂດຍການນຳໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີ ນັບຈາກວັນທີທີ່ໄດ້ຮັບມາຈົນເຖິງວັນຄົບກຳນົດ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຈະຕ້ອງມີການທົບທວນສຳລັບຂໍ້ບົກຜ່ອງເປັນແຕ່ລະໄລຍະ. ເງິນແຮສຳລັບຫຼັກຊັບທີ່ມີຂໍ້ບົກຜ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີຄວາມສຳຄັນ ຫຼື ເປັນເວລາດົນຂອງມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນ "ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫຼັກຊັບ" ໃນໃບລາຍງານຜົນໄດ້ຮັບ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອ ພັນທະບັດລັດຖະບານ ເຊິ່ງໄດ້ຈັດປະເພດເປັນການລົງທຶນໃນຫຼັກຊັບ ຖືໄວ້ຈົນຄົບກຳນົດ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງຢ່າງ ແລະ ບໍ່ໄດ້ມີໄວ້ໃນງານໂດຍກິດຈະການໃນບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນ ເພື່ອການລົງທຶນ. ລວມເຖິງຊັບສິນທີ່ຢູ່ລະຫວ່າງ ກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງບໍລິສັດ, ກໍຕໍ່ເມື່ອ ເຂົ້າໃນນິຍາມຂອງຊັບສິນເພື່ອການລົງທຶນ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມສະສົມ ແລະ ທີ່ດິນບໍ່ໄດ້ຫັກຄ່າຫຼ້ຽຍຫ້ຽນ.

2.8 ທີ່ດິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານແລະ ອຸປະກອນທີ່ມີຕົວຕົນທັງໝົດ ແມ່ນໄດ້ຖືກບັນທຶກຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຽຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສິນບັດຄົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກວ່າການປະເມີນຜົນການດຳເນີນງານທີ່ມີຢູ່ຂອງຊັບສິນເຂົ້າສູ່ບໍລິສັດ ແລະ ລາຍການດັ່ງກ່າວຈະຕ້ອງວັດແທກໄດ້ຢ່າງໜ້າເຊື່ອຖື ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ຈະຖືກປ່ຽນແທນ ແລະ ຖອດອອກ ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼ້ຽຍຫ້ຽນຍົນຫຼັກການ ການຄິດໄລ່ ແບບເສັ້ນຊື່ ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ຫຼື ການຕີລາຄົງຕາມການພິຈາລະນາ ກັບ ມູນຄ່າຕາມບັນຊີ ແລະ ຮັບຮູ້ເຂົ້າໃນ 'ແຍກປະເພດຕ່າງຫາກ' ໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ທີ່ດິນ, ອາຄານ ແລະ ອຸປະກອນ (ຕໍ່)

ປະເພດຊັບສິນ	ປີ
ອາຄານ	10
ພາຫະນະ	10
ອຸປະກອນຫ້ອງການ	5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	5

2.9 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ເບື້ອງຕົ້ນຕາມຈຳນວນເງິນທີ່ໄດ້ຮັບ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງວັນທີຂອງໃບສະຫຼຸບຊັບສິນບັດ.

ຕົ້ນທຶນຂອງການກູ້ຢືມອື່ນໆທັງຫມົດ ແມ່ນໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບ ໃນໄລຍະທີ່ລາຍການນັ້ນເກີດຂຶ້ນ.

2.10 ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບຕັ້ບເງິນສຸດທິທີ່ຫັກ ສ່ວນຫຼຸດທີ່ໄດ້ຮັບ, ຖ້າມີ. ລາຍຮັບຈາກການກໍ່ສ້າງ ແລະ ບໍລິການ ຮັບຮູ້ເມື່ອ ມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້. ຕົ້ນທຶນທີ່ກ່ຽວຂ້ອງຖືກຮັບຮູ້ ໃນ ກຳໄລຫຼື ຂາດທຶນເມື່ອເກີດຂຶ້ນ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ອີງຕາມພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບຈາກຄ່າເຊົ່າແມ່ນຮັບຮູ້ບົນພື້ນຖານເສັ້ນຊື່ໃນຊ່ວງເວລາທີ່ກຳນົດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2.11 ສັນຍາເຊົ່າ - ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ທີ່ດິນທີ່ທາງ ບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນບັດຄົງທີ່ເພື່ອການລົງທຶນ ໃນໃບ ສະຫຼຸບຊັບສິນບັດ ແລະ ດິນແມ່ນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ. ລາຍຮັບຈາກຄ່າເຊົ່າ ຖືກຮັບຮູ້ ແບບເສັ້ນຊື່ ຕາມອາຍຸການຂອງສັນຍາ ເຊົ່າດັ່ງກ່າວ. ອ້າງອີງເຖິງ ຕາມບົດອະທິບາຍຂໍ້ 6.

2.12 ອາກອນ

ບໍລິສັດໄດ້ບັນທຶກອາກອນກຳໄລ ຕາມເກນຄ້າງຄ້າງ. ບໍລິສັດບໍ່ໄດ້ບັນທຶກອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບໃນອະນາຄົດ ເຊິ່ງເກີດ ຈາກສ່ວນຜິດຕ່າງຊົ່ວຄາວ. ອາກອນກຳໄລ ຖືກຄິດໄລ່ໂດຍການເອົາລາຍຮັບຈາກການກໍ່ສ້າງທີ່ເກີດຂຶ້ນໃນປີ ຄູນໃຫ້ອັດຕາສ່ວນ ກຳໄລລວມ ແລະ ຄູນກັບອັດຕາອາກອນກຳໄລ (ຕາມບົດອະທິບາຍຂໍ້ 18). ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອ ລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ບັນຫາທາງ ອາກອນທີ່ພົບເຫັນອາດຈະຕ້ອງມີຄຳທັກ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກັບບໍລິສັດ

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ອາກອນ (ຕໍ່)

ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີ ທີ່ມີການກວດສອບໄດ້ສຳເລັດ.

2.13 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍຂໍ້ 2.14.

2.14 ຜົນປະໂຫຍດພະນັກງານ

ອີງຕາມກົດໝາຍແຮງງານ ສປປ ລາວ, ເມື່ອພະນັກງານຈະບຳນານ ໂດຍຄົບກຳນົດ ແລະ ເງື່ອນໄຂທີ່ ກຳນົດໄວ້ໃນກົດໝາຍແຮງງານ. ເພາະສະນັ້ນບໍລິສັດຈະມີພັນທະທີ່ຕ້ອງຈ່າຍເງິນບຳນານ.

ເງິນແຮ ສຳລັບຜົນປະໂຫຍດພະນັກງານທັງໝົດບໍ່ໄດ້ຮັບຮູ້ເປັນໜີ້ສິນໃນແຕ່ລະປີ. ໜີ້ສິນ ແລະ ລາຍຈ່າຍສຳລັບຜົນປະໂຫຍດພະນັກງານຈະຮັບຮູ້ໃນໃບສະຫລຸບຊັບສິນບັດ ແລະ ໃນໃບລາຍງານຜົນໄດ້ຮັບ ຕາມຈຳນວນທີ່ເກີດຂຶ້ນຈິງ ທີ່ ຮອດກຳນົດເວລາບຳນານ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2024 ລ້ານກີບ	2023 ລ້ານກີບ
ເງິນສົດໃນມື	330	180
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	41	186
ລວມ	**371**	**366**

ເງິນສົດໃນມື ປະກອບມີເງິນສົດຍ່ອຍ ສຳລັບການດຳເນີນງານໃນແຕ່ລະມື້.

ເງິນຝາກທີ່ສາມາດຖອນຄືນໄດ້ ໃນເວລາທີ່ຕ້ອງການກັບສະຖາບັນການເງິນ ແມ່ນເງິນຝາກກັບທະນາຄານທ້ອງຖິ່ນພາຍໃນປະເທດ ປະກອບດ້ວຍ ສະກຸນເງິນຄື ໂດລາສະຫະລັດ, ບາດ, ແລະ ກີບ ໃນບັນຊີກະແສລາຍວັນ ໂດຍບໍ່ມີດອກເບ້ຍ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	2024 ລ້ານກີບ	2023 ລ້ານກີບ
ໜີ້ຕ້ອງຮັບການຄ້າ	227,543	218,776
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ	(227,543)	(203,539)
ໜີ້ຕ້ອງຮັບ, ສຸດທິ (ກ)	-	15,237
ໜີ້ຕ້ອງຮັບ ຈາກ ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 20) ຂ)	458,167	559,915
ໜີ້ຕ້ອງຮັບອື່ນໆ	55	55
ລວມ	**458,222**	**575,207**

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ (ຕໍ່)

(ກ) ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ ມີອາຍຸການດັ່ງຕໍ່ໄປນີ້:

	2024 ລ້ານກີບ	2023 ລ້ານກີບ
ບໍ່ຄົບກຳນົດ	-	1,173
ເກີນກຳນົດ:		
0 – 3 ເດືອນ	-	-
3 – 6 ເດືອນ	-	-
6 – 12 ເດືອນ	-	-
ຫຼາຍກວ່າ 1 ປີ	-	-
ຫຼາຍກວ່າ 2 ປີ	-	14,064
ຫຼາຍກວ່າ 3 ປີ	227,543	203,539
ຍອດລວມໜີ້ຕ້ອງຮັບການຄ້າ, ສຸດທິ	227,543	218,776
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ*	(227,543)	(203,539)
ລວມ	**-**	**15,237**

*ບໍລິສັດມີລູກຄ້າພຽງລາຍດຽວຄືໜ່ວຍງານລັດຖະບານ ສປປ ລາວ, ເຊິ່ງຈະພິຈາລະນາຕັ້ງຄ່າເຜື່ອໜີ້ສົງໄສຈະສູນຕາມ ກິດເກນບາງປະການ ເຖິງວ່າໃນອະດີດ ຈະບໍ່ມີການຜິດນັດຊຳລະເງິນຈາກໜ່ວຍງານລັດຖະບານ ສປປ ລາວ, ແຕ່ຢ່າງໃດກໍ່ຕາມ ຝ່າຍບໍລິຫານພິຈາລະນາຕັ້ງຄ່າເຜື່ອໜີ້ສົງໄສຈະສູນ 100% ສຳລັບຍອດເຫຼືອ ທີ່ເກີນ 3 ປີ ເປັນການສ່ວນ. ຍົກເວັ້ນ ຖ້າມີສັນຍາທີ່ຈະຈ່າຍຈາກລັດຖະບານ.

ນອກຈາກນັ້ນ, ໃນລະຫວ່າງປີ ບໍລິສັດຍັງໄດ້ປັບຄືນຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ ມູນຄ່າ 764 ລ້ານກີບ (2023: 500 ລ້ານກີບ) ເພື່ອຫັກລ້າງກັບໜີ້ຕ້ອງຮັບ, ຫັກລົບກັບສ່ວນຕັ້ງເພີ່ມສຳລັບຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ ມູນຄ່າ 24,768 ລ້ານກີບ (2023: 2,911 ລ້ານກີບ). ດັ່ງນັ້ນ, ການເຄື່ອນໄຫວສຸດທິຂອງຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ໃນລະຫວ່າງປີ ແມ່ນ 24,004 ລ້ານກີບ (2023: 81,702 ລ້ານກີບ).

5. ການລົງທຶນໃນຫຼັກຊັບ - ຖືໄວ້ຈົນຄົບກຳນົດ

	2024 ລ້ານກີບ	2023 ລ້ານກີບ
ຍອດຍົກມາ ນະວັນທີ 1 ມັງກອນ	11,095	11,095
ການເພີ່ມຂຶ້ນ	-	5,789
ສະສາງ*	(11,095)	(5,789)
ວັນທີ 31 ທັນວາ	**-**	**11,095**

*ໃນລະຫວ່າງປີ, ບໍລິສັດໄດ້ຂາຍພັນທະບັດທີ່ໄດ້ຮັບຈາກລັດຖະບານ ເພື່ອຫັກລົບກັບໜີ້ຕ້ອງຮັບກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃຕ້ສັນຍາການຂາຍພັນທະບັດມູນຄ່າ 6,657 ລ້ານກີບ (2023: 5,789 ລ້ານກີບ) ເຊິ່ງຖືວ່າຂາດທຶນຈາກການຂາຍ 4,438 ລ້ານກີບ (2023: ບໍ່ມີ) ແລະ ມີດອກເບ້ຍທີ່ຕ້ອງຮັບຈາກພັນທະບັດລັດຖະບານ ທີ່ຕັ້ງໄວ້ເພື່ອເຊິ່ງໄດ້ສະແດງໃນລາຍງານຜົນໄດ້ຮັບແມ່ນ 1,608 ລ້ານກີບ (2023: ບໍ່ມີ).

5. ການລົງທຶນໃນຫຼັກຊັບ - ຖືໄວ້ຈົນຄົບກຳນົດ (ຕໍ່)

	2024 ລ້ານກີບ	2023 ລ້ານກີບ
ໝຸນວຽນ	-	5,657
ບໍ່ໝຸນວຽນ	-	5,438
ລວມ	**-**	**11,095**

6. ຊັບສິນບັດຄົງທີ່ເພື່ອການລົງທຶນ

	ທີ່ດິນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາ ນະວັນທີ 1 ມັງກອນ 2024		
ຕົ້ນທຶນ	189,442	189,442
ຫັກ: ຄ່າຫຼຸ້ຍຫ້ຽນ ສະສົມ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,442**
ຍອດເຫລືອທ້າຍ ນະວັນທີ 31 ທັນວາ 2024		
ຍອດຍົກມາ ສຸດທິ	189,442	189,442
ຈັດປະເພດ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,442**
ຍອດຍົກມາ ນະວັນທີ 31 ທັນວາ 2024		
ຕົ້ນທຶນ	189,442	189,442
ຫັກ: ຄ່າຫຼຸ້ຍຫ້ຽນ ສະສົມ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,443**

ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນໄລຍະຍາວກັບລູກຄ້າເປັນເວລາ 15 ປີ ເລີ່ມແຕ່ປີ 2023 – 2038.

ທີ່ດິນ 189,442 ລ້ານກີບ ແມ່ນຫຼັກຊັບຄ້ຳປະກັນໃຫ້ເງິນກູ້ຂອງກຸ່ມບໍລິສັດພຸສີ.

7. ຊັບສິນໝຸນວຽນອື່ນໆ

	2024 ລ້ານກີບ	2023 ລ້ານກີບ
ໜີ້ຕ້ອງຮັບອື່ນໆ*	-	1,473
ເງິນລ່ວງໜ້າໃຫ້ຜູ້ສະໜອງ	205	205
ເງິນລ່ວງໜ້າໃຫ້ພະນັກງານ	38	38
ຄ່າໃຊ້ຈ່າຍ ຈ່າຍລ່ວງໜ້າ	63	62
ລວມ	**306**	**1,778**

* ໃນລະຫວ່າງປີ, ໜີ້ຕ້ອງຮັບອື່ນໆ ທີ່ມາຈາກດອກເບ້ຍພັນທະບັດ ຖືກປັ່ນກັບ ຂາດທຶນໃນບົດລາຍງານຜົນໄດ້ຮັບ ເກີດຈາກການ ຂາຍພັນທະບັດລັດຖະບານ (ບົດອະທິບາຍຂໍ້ 5).

8. ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ

	ທີ່ດິນ ລ້ານກີບ	ອາຄານ ລ້ານກີບ	ຍານພາຫະນະ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຄອມພິວເຕີ ແລະ ເຄື່ອງໃຊ້ ຫ້ອງການ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2023						
ຕົ້ນທຶນ	213,568	18	34,852	1,061	448	249,947
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(18)	(33,389)	(1,061)	(448)	(34,916)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**213,568**	**-**	**164**	**-**	**-**	**213,732**
ຍອດຍົກມາຕາມບັນຊີສຸດທິ	213,568	-	164	-	-	213,732
ເພີ່ມຂຶ້ນ*	176,366	-	-	-	-	176,366
ສະສາງ**	(68,958)	-	-	-	-	(68,958)
ຄ່າຫລຸ້ຍຫ້ຽນ (ບົດອະທິບາຍ 16)	-	-	(84)	-	-	(84)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**320,976**	**-**	**80**	**-**	**-**	**321,056**
ໃນວັນທີ 31 ທັນວາ 2024						
ຕົ້ນທຶນ	320,976	18	34,852	1,061	448	357,355
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(18)	(33,473)	(1,061)	(448)	(35,000)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**320,976**	**-**	**80**	**-**	**-**	**321,056**

* ເພີ່ມຂຶ້ນໃນລະຫວ່າງປີ ແມ່ນຊື້ດິນຈາກພາກສ່ວນທີ່ກ່ຽວຂ້ອງ.

**ສະສາງອອກໃນລະຫວ່າງປີ ແມ່ນຂາຍອອກໃຫ້ພາກສ່ວນທີ່ກ່ຽວຂ້ອງ.

ທີ່ດິນ 134,797 ລ້ານກີບ ແມ່ນຫຼັກຊັບຄ້ຳປະກັນເພື່ອກູ້ຢືມຂອງບໍລິສັດ (ບົດອະທິບາຍຂໍ້ 10) ແລະ 184,077 ລ້ານກີບ ແມ່ນຫຼັກຊັບຄ້ຳປະກັນໃຫ້ເງິນກູ້ຂອງກຸ່ມບໍລິສັດພູສີ.

9. ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2024 ລ້ານກີບ	2023 ລ້ານກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	10,665	10,394
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 20) ຂ)	107,648	122,774
ລວມ	**118,313**	**133,168**

10. ເງິນກູ້ຢືມ, ສຸດທິ

	2024 ລ້ານກີບ	2023 ລ້ານກີບ
ສະຖາບັນການເງິນ	154,596	167,922
ລວມ	**154,596**	**167,922**

	2024 ລ້ານກີບ	2023 ລ້ານກີບ
ໝຸນວຽນ	116,096	29,422
ບໍ່ໝຸນວຽນ	38,500	138,500
ລວມ	**154,596**	**167,922**

ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້:

	2024 ລ້ານກີບ	2023 ລ້ານກີບ
ຍອດຍົກມາວັນທີ 1 ມັງກອນ	167,922	72,922
ເພີ່ມຂຶ້ນ	-	104,000
ຊຳລະຄືນ	(13,326)	(9,000)
ວັນທີ 31 ທັນວາ	**154,596**	**167,922**

10. ເງິນກູ້ຢືມ, ສຸດທິ (ຕໍ່)

ເງິນກູ້ຢືມຈາກສະຖາບັນການເງິນ:

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36,000 ລ້ານກີບ ກັບທະນາຄານການຄ້າພາຍໃນປະເທດ ເພື່ອເປັນທຶນໝຸນວຽນ ສຳລັບການກໍ່ສ້າງ ທາງ ເຊິ່ງມີອັດຕາດອກເບ້ຍ 17% ຕໍ່ປີ ນັບຕັ້ງແຕ່ ວັນທີ 29 ພຶດສະພາ 2015, ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ບົດອະທິບາຍຂໍ້ 8) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບແຕ່ວັນທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ໃນລະຫວ່າງປີ, ມີການຊຳລະແລ້ວມູນຄ່າ 13,326 ລ້ານກີບ.

ນະວັນທີບົດລາຍງານ, ໄດ້ມີການເຈລະຈາເພີ່ມເຕີມກ່ຽວກັບໄລຍະເວລາການກູ້ຢືມ, ເພື່ອທີ່ບໍລິສັດຈະມີການຮັບຮູ້ລາຍຈ່າຍດອກເບ້ຍໂດຍອີງຕາມເງື່ອນໄຂຕ່າງໆທີ່ກ່າວມາຂ້າງເທິງ.

ບໍລິສັດ ໄດ້ເຮັດສັນຍາກູ້ຢືມເງິນ ອີງເງິນຈຳນວນ 300 ຕື້ກີບ ກັບທະນາຄານການຄ້າພາຍໃນປະເທດ ເຊິ່ງມີອັດຕາດອກເບ້ຍ 9.50% ຕໍ່ປີ ເລີ່ມແຕ່ວັນທີ 29 ທັນວາ 2022 ຫາ 29 ທັນວາ 2027. ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ບົດອະທິບາຍຂໍ້ 8) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ. ບໍລິສັດຕ້ອງຊຳລະຄືນຕົ້ນທຶນເງິນກູ້ງວດທຳອິດໃນວັນທີ 29 ທັນວາ 2025 ແລະ ຊຳລະດອກເບ້ຍເປັນລາຍເດືອນ.

ການວິເຄາະເງິນກູ້ຢືມຕັ້ງກ່າວມີດັ່ງຕໍ່ໄປນີ້:

	2024 ລ້ານກີບ	2023 ລ້ານກີບ
ຕ່ຳກວ່າ 1 ປີ	116,096	29,422
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	38,500	138,500
ລວມ	**154,596**	**167,922**

11. ອາກອນຄ້າງຈ່າຍ

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໜ່ວຍງານສ່ວຍສາອາກອນ ແລະ ບໍລິສັດ, ອາກອນກຳໄລ ຖືກຄິດໄລ່ໂດຍການເອົາລາຍຮັບຈາກການກໍ່ສ້າງທີ່ເກີດຂຶ້ນໃນປີ ຄູນໃຫ້ອັດຕາສ່ວນກຳໄລລວມ ແລະ ຄູນກັບອັດຕາອາກອນກຳໄລ. ອາກອນກຳໄລຈະໄດ້ຮັບການສະສາງຕົ້ນເມື່ອ ລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນລະຫວ່າງປີ, ບໍລິສັດມີກຳໄລຈາກການປັບລາຍການອາກອນມູນຄ່າເພີ່ມ ແລະ ອາກອນກຳໄລຄ້າງຈ່າຍ ທີ່ສະແດງໃນໃບລາຍການຍື່ນໄດ້ຮັບ ມູນຄ່າ 8,101 ລ້ານກີບ, ອີງຕາມການຂໍ້ຕົກລົງເລກທີ 069/PCD, ລົງວັນທີ 30 ເມສາ 2024 ລະຫວ່າງບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າມີພາລະຜູກພັນທາງອາກອນເກີດຂຶ້ນໃນອະນາຄົດທີ່ກ່ຽວຂ້ອງກັບໂຄງການ ພາກສ່ວນທີ່ກ່ຽວຂ້ອງຈະເປັນຜູ້ຮັບຜິດຊອບແທນບໍລິສັດ.

ໃນວັນທີ 31 ທັນວາ 2024 ແລະ 2023, ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

12. ໜີ້ສິນໝຸນວຽນອື່ນໆ

	2024 ລ້ານກີບ	2023 ລ້ານກີບ
ອາກອນມູນຄ່າເພີ່ມ ຄ້າງຈ່າຍ*	20,686	15,310
ໜີ້ຕ້ອງສົ່ງດອກເບ້ຍໃຫ້ສະຖາບັນການເງິນ	16,814	33,600
ເງິນປັນຜົນຄ້າງຈ່າຍ	-	1,863
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	930	930
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ອື່ນໆ	2,997	2,719
	42,320	**55,315**

* ອາກອນມູນຄ່າເພີ່ມຄ້າງຈ່າຍ ໄດ້ຖືກຄິດໄລ່ໂດຍ ຄູນໃຫ້ 10% ຂອງລາຍຮັບຈາກການກໍ່ສ້າງ ແລະ ຈະຖືກຈ່າຍກໍ່ຕໍ່ເມື່ອ ລັດຖະບານລາວຊໍາລະໜີ້ໃຫ້ບໍລິສັດ.

ໃນລະຫວ່າງປີ, ລັດຖະບານລາວໄດ້ເພີ່ມອັດຕາອາກອນມູນຄ່າເພີ່ມ (VAT) ຈາກ 7 % ເປັນ 10% ມີຜົນບັງຄັບໃຊ້ ແຕ່ວັນທີ 1 ພຶດສະພາ 2024 ເປັນຕົ້ນໄປ.

13. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນໃນທຶນຈົດທະບຽນ

	ຈຳນວນຂອງ ຮຸ້ນ ລ້ານຮຸ້ນ	ຮຸ້ນສາມັນ ລ້ານກີບ	ສ່ວນເພີ່ມມູນ ຄ່າຮຸ້ນ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2023	582	582,000	12,540	594,540
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2023	**582**	**582,000**	**12,540**	**594,540**
ໃນວັນທີ 1 ມັງກອນ 2024	582	582,000	12,540	594,540
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2024	**582**	**582,000**	**12,540**	**594,540**

ໃນວັນທີ 31 ທັນວາ 2024 ແລະ 2023, ບໍລິສັດມີຮຸ້ນ ຈຳນວນ 582,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 1,000 ກີບ ແລະ ໄດ້ຊໍາລະຄົບໝົດແລ້ວ.

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12,540 ລ້ານກີບ ແລະ ຖືກຈົດຖະບຽນເຂົ້າໃນຈະຕະຫຼາດຫຼັກຊັບໃນປີ 2017.

14. ສຳຮອງຕາມລະບຽບການ

	2024 ລ້ານກີບ	2023 ລ້ານກີບ
ຍອດຍົກມາ	17,510	16,047
ເພີ່ມຂຶ້ນ	3,637	1,463
	21,147	**17,510**

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳ ປີ ພາຍຫລັງທີ່ໄດ້ຫັກເງິນຂາດທຶນ ເປັນເງິນສຳຮອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

15. ເງິນປັນຜົນ

2024:
ໃນກອງປະຊຸມຜູ້ຖືຮຸ້ນ, ໃນວັນທີ 26 ເມສາ 2024, ບັນດາຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນຈາກກຳໄລສະສົມຂອງບໍລິສັດ ຫຼັງຈາກຫັກຄັງສຳຮອງຕາມກົດໝາຍ ແລະ ກຳໄລສຸດທິພາຍໃນປີ 2023 ມູນຄ່າ 22 ກີບຕໍ່ຮຸ້ນ ລວມມູນຄ່າ 12,804 ລ້ານ ແລະ ຊຳລະເຕັມຈຳນວນພາຍໃນປີ.

2023:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ ທີ່ໄດ້ຈັດຂຶ້ນວັນທີ 27 ເມສາ 2023. ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2022 ເນື່ອງຈາກຂາດທຶນສະສົມຈາກການດຳເນີນທຸລະກິດ.

16. ລາຍຈ່າຍຕາມລັກສະນະ

	2024 ລ້ານກີບ	2023 ລ້ານກີບ
ລາຍຈ່າຍພະນັກງານ	1,305	1,218
ລາຍຈ່າຍຄ່າຫຼຸ້ຍຫ້ຽນ (ບົດອະທິບາຍທີ 8)	93	208
ລາຍຈ່າຍອື່ນໆ	552	2,519
ລາຍຈ່າຍດ້ານທີ່ປຶກສາ	606	582
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	265	304
ວັດຖຸ	493	222
ລາຍຈ່າຍຄ່າເດີນທາງ	330	549
	3,644	**5,602**

17. ລາຍຈ່າຍທາງການເງິນ

	2024	2023
	ລ້ານກີບ	ລ້ານກີບ
ລາຍຈ່າຍດອກເບ້ຍ ຈາກເງິນກູ້ຢືມ		
- ສະຖາບັນການເງິນ	16,889	14,544
	16,889	**14,544**

18. ອາກອນກຳໄລ

ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ (ບົດອະທິບາຍຂໍ້ 11), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງພາຍໃນປີ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

19. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນ ແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ໃຫ້ແກ່ຜູ້ຖືຮຸ້ນຂອງບໍລິສັດ ຕາມຈຳນວນຮຸ້ນສະເລ່ຍ ຂອງຜູ້ຖືຮຸ້ນສາມັນ ໃນລະຫວ່າງປີ.

	2024	2023
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	582	582
ກຳໄລສຸດທິໃນປີ ໃຫ້ຜູ້ຖືຮຸ້ນ (ລ້ານກີບ)	36,368	142,238
ກຳໄລ ພື້ນຖານຕໍ່ຮຸ້ນ (ກີບ)	**62.49**	**244.40**

20. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມຫົວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນ ບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດ ໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

20. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ໃນວັນທີ 31 ທັນວາ 2024, ບໍລິສັດ ແມ່ນຢູ່ພາຍໃຕ້ການຄວບຄຸມໂດຍ ຄອບຄົວ ພົມມະຈິດ, ເຊິ່ງຖືຮຸ້ນ 86% ຂອງ ຮຸ້ນບໍລິສັດ (2023: 86%). ສ່ວນຮຸ້ນທີ່ເຫຼືອ 14% ແມ່ນຖືຮຸ້ນໂດຍບຸກຄົນທົ່ວໄປ, ຝ່າຍຄວບຄຸມ ບໍລິສັດ ຄື ທ່ານ ສີທອງ ພົມມະຈິດ. ເຊິ່ງ ທ່ານໄດ້ເປັນ ຜູ້ບໍລິຫານຂອງ ບໍລິສັດ ພູສີກຣຸບ ຈຳກັດ ຜູ້ດຽວ (ກຸ່ມບໍລິສັດ ພູສີ).

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງໄລຍະ ໄດ້ວິເຄາະດັ່ງລຸ່ມນີ້:

ກ) ຊື້ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	2024 ລ້ານກີບ	2023 ລ້ານກີບ
ລາຍຮັບຄ່າເຊົ່າຕົນຈາກພາກສ່ວນທີ່ກ່ຽວຂ້ອງ	8,317	3,750
ຄ່ານ້ຳມັນ	297	529
ຄ່າເຊົ່າ	180	180

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ

	2024 ລ້ານກີບ	2023 ລ້ານກີບ
ໜີ້ຕ້ອງຮັບກັບພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 4)*	485,167	559,915
ເຈົ້າໜີ້ອື່ນໆ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 9)	107,648	122,774
ເງິນກູ້ຢືມໄລຍະຍາວໃຫ້ພາກສ່ວນທີ່ກ່ຽວຂ້ອງ	505	861

*ຈຳນວນເງິນຕ້ອງຮັບຈາກ ກຸ່ມບໍລິສັດ ພູສີ ຈຳກັດ ຜູ້ດຽວ ເຊິ່ງບໍ່ມີດອກເບ້ຍ ແລະ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ ສາມາດຮຽກເກັບຄືນໄດ້ໃນເວລາທີ່ຕ້ອງການ.

ຄ) ຄ່າຕອບແທນຜູ້ບໍລິຫານ

ບໍ່ມີເງິນປະໂຫຍດ ທີ່ໄດ້ຈ່າຍໃຫ້ຜູ້ບໍລິຫານ ໃນລະຫວ່າງປີ.

21. ພາລະຜູກພັນ ແລະ ສັນຍາທີ່ສຳຄັນ

	2024 ລ້ານກີບ	2023 ລ້ານກີບ
ພາລະຜູກພັນ ຄ່າເຊົ່າຫ້ອງການ (1)	165	345
ຄ່າບໍລິການ	-	485

(1) ບໍລິສັດເປັນຜູ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານໂດຍບໍ່ມີການຍົກເລີກສັນຍາ. ໄລຍະເຊົ່າແມ່ນ 10 ປີ ແລະ ສ່ວນໃຫຍ່ຂອງສັນຍາເຊົ່າສາມາດຕໍ່ສັນຍາເມື່ອສັນຍາຈະໝົດອາຍຸຕາມການຕົກລົງກັນ.

ສະມາຊິກສະພາບໍລິຫານ ອິດສະລະ ຂອງ ພາພ:

ຊີວະປະຫວັດຫຍໍ້ສະມາຊິກສະພາບໍລິຫານ ອິດສະລະ



ທ່ານ ນັນທະລັດ ທິລາກຸນ.

ບ້ານ ວຽງຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ໂທລະສັບມືຖື: (856-20) 56110372.

ວັນເດືອນປີເກີດ: ວັນທີ 05 ມັງກອນ 1970.

ສັນຊາດ: ລາວ.

ອີເມວ: thirakul@hotmail.com

ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

ປະຈຸບັນ	ສະມາຊິກອິດສະລະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
2011 - 2016	ຜູ້ອຳນວຍການ/Consultant – Accounting Company.
2009 - 2011	ຜູ້ອຳນວຍການ/Petroff Communication.
2001 - 2003	ຜູ້ຈັດການ/Canada Life Insurance.

ຊີວະປະຫວັດຫຍໍ້ຂອງ ສະມາຊິກສະພາບໍລິຫານ ອິດສະລະ



I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: ທ່ານ ພຸດທະເສນ ພົມມີໄຊ

ສັນຊາດ: ລາວ , ເຊື້ອຊາດ: ລາວ

ວັນເດືອນປີເກີດ: 07 / 06 / 1980

ບ່ອນເກີດ: ບ້ານ ໂຊກຄຳ

ເມືອງ: ໄຊເສດຖາ ແຂວງ: ນະຄອນຫຼວງວຽງຈັນ

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາຕີ:**

❖ ຫົວຂໍ້ວິຊາ: ຂົວ - ທາງ ; ສາຂາ: ກໍ່ສ້າງທາງ

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ຝຶກກ່ຽວກັບການນຳໃຊ້ຄອມພິວເຕີ	ສູນຄອມພິວເຕີ	03 ເດືອນ
2	ພາສາ ອັງກິດ	ສູນເອເລກໂຕ	03 ປີ
3	ການນຳໃຊ້ກ້ອງ ໂຕຕານ	ກົມ ຂົວ-ທາງ	01 ອາທິດ

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ ຮັບຜິດຊອບ	ໄລຍະເວລາ
1	ບໍລິສັດ ແມັກ ທີ່ປຶກສາ	ວິຊາການ	02 ປີ
2	ບໍລິສັດ ຄຳແສງ ກໍ່ສ້າງ ຂົວ - ທາງ	ວິຊາການ	03 ປີ
3	ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ	ສະມາຊິກສະພາບໍລິຫານ ອິດ ສະລະ	ປະຈຸບັນ

ເອກະສານຄັດຕິດ 5

ໃບມອບສິດ

ຂຽນທີ່.....

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ ເດືອນ ແລະ ປີເກີດ..... ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນ ເລກທີ.....ເຮືອນເລກທີ..... ຖະໜົນ .....ບ້ານ.....ເມືອງ..... ແຂວງ .....ປະເທດ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ .....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (3.1) ທ່ານ/ທ່ານ ນາງ.....ອາຍຸ.....ປີ ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນເລກທີ....., ເຮືອນເລກທີ.....ບ້ານ..... ເມືອງ .....ແຂວງ....., ປະເທດ..... ຫຼື

☐ (3.2) ທ່ານ ນັນທະລັດ ທິລະກຸນ ອາຍຸ 55 ປີ, ບ້ານ ບ້ານ ວຽງຄຳ ເມືອງ ສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ, ປະເທດ ລາວ ຫຼື

☐ (3.3) ທ່ານ ພຸດທະເສນ ພົມມີໄຊ ອາຍຸ 44 ປີ, ບ້ານ ໂຊກຄຳ ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ ປະເທດ ລາວ

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024, ໃນວັນທີ 25 ເດືອນ ເມສາ ປີ 2025 ເວລາ 09:00 ໂມງ ຢູ່ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນ ປະຈຳປີ 2024 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ຮັບຮອງ ການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2024.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 06: ພິຈາລະນາ ແລະ ຮັບຮອງການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 07: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພກພ.

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຈຸດປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມມີການພິຈາລະນາ ຫຼື ລົງມະຕິເລື່ອງໃດນອກເໜືອທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພື່ອເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ແລະ

(7) ກິດຈະກຳໃດທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມນັ້ນ ໃຫ້ຖືກັນກັບວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ລົງລາຍເຊັ່ນ ຜູ້ຖືຮຸ້ນທີ່ມອບໝາຍ **ລົງລາຍເຊັ່ນ ຜູ້ຕາງໜ້າ**

_____ _____

ຊື່ ແລະ
ນາມສະກຸນ:..... ຊື່ ແລະ
ນາມສະກຸນ:.....

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສິດ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ,ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງບໍລິສັດ ພຸ ສີກໍ່ສ້າງ ແລະ ພັດທະນາມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານ ຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ.

<u>**ບໍລິສັດຂໍສະຫງວນສິດໃນການອານຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້**</u>

1. **ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີເຂົ້າຮ່ວມກອງປະຊຸມ**

1.1 ກໍລະນີຜູ້ຖືຮຸ້ນເປັນບຸກຄົນ

1.1.1. ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2. ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສິດຕາມແບບຟອມທີ່ຄັດຕິດພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

(2) ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

(3) ເອກະສານທີ່ທາງລັດຖະການອອກໃຫ້ຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຄະນະອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະ ສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນນິຕິບຸກຄົນ (ຄະນະອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອານຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ເຊິ່ງມີຂໍ້ມູນສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັ່ນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ)

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

- ໃບມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ) ໃບທະບຽນວິສາຫະກິດ, ກິດລະບຽນຂອງບໍລິ ສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນມີອຳນາດກະທຳການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ) ຕາມຂໍ້ 1.2.1(1) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື ຂໍ້ 1.2.2 ແລ້ວແຕ່ກໍລະນີ

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວ

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນບໍລິສັດໄດ້ດ້ວຍຕົນເອງສາມາດມອບໝາຍໃຫ້ຜູ້ຕ່າງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ໂດຍດຳເນີນການດັ່ງນີ້:

2.1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ □ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ;

2.2. ນຳສົ່ງໜັງສືມອບສິດຄືນເລຂາກອງປະຊຸມບໍລິສັດ ກ່ອນວັນທີ 25 ເມສາ 2025 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕ່າງໜ້າຫຼາຍຄົນເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນໂດຍບໍ່ສາມາດມອບໝາຍພຽງບາງສ່ວນນ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກ່ອນເປີດກອງປະຊຸມ 1 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 08:00 ໂມງ ເປັນຕົ້ນໄປໃນວັນ

ທີ 25 ເມສາ 2025 ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ຕາມແຜນທີ່ທີ່ໄດ້ຄັດຕິດມາພ້ອມ.

ໃນນີ້, ໃນແຕ່ລະອາລະກອງປະຊຸມກ່ອນເລີ່ມການລົງຄະແນນ, ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະອາລະປະຊຸມສຳເລັດແລ້ວ.

4. ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

4.1. ການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນຕົນຖືຢູ່ ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳລັບທຸກໆ ອາລະປະຊຸມທີ່ຕ້ອງມີການລົງຄະ ແນນສຽງໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບອາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະອາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2. ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະອາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະອາລະກອງປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານຈະຖາມກອງປະຊຸມວ່າມີຜູ້ໃດບໍ່ເຫັນດີ ຫຼື ບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີ ກັບອາລະປະຊຸມດັ່ງກ່າວໃຫ້ການເຄື່ອງໝາຍເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມທັງລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນເພື່ອສົ່ງມອບໃຫ້ເຈົ້າໜ້າທີ່ຂອງບໍລິສັດນຳໄປກວດນັບ, ຍົກເວັ້ນສຳລັບຜູ້ຕາງໜ້າເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະ ຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະອາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມາລວມເປັນຄະແນນສຽງອີກ.

4.3. ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດຈະເປັນຜູ້ອະທິບາຍວິທີນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມອາລະປະຊຸມໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະອາລະ.

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ: ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394

-